# ປະກາດຮັບສະໝັກ
# ຜູ້ນຳດ້ານສິດທິມະນຸດຂອງຄົນຕ່າງປະເທດ ປີ 2026

☐ **(ໄລຍະຮັບສະໝັກ)** : ວັນທີ 16.06.2026 (ວັນຄານ) 9ໂມງ ເຊົ້າ ~ ວັນທີ 30.06.2026 (ວັນຄານ) 6ໂມງ ແລງ

☐ **(ຈຳນວນຮັບສະໝັກ)**: 50 ຄົນ ກະຊວງແຮງງານ ແລະ ການຈ້າງງານ(ປະຈຳໃນແຕ່ລະພື້ນທີ່)ຮັບໄດ້ບໍ່ເກີນ 10 ຄົນ

* ຜູ້ທີ່ໄດ້ຮັບການແນະນຳຈາກອົງການທີ່ກ່ຽວຂ້ອງກັບຄົນຕ່າງປະເທດ(ເຊັ່ນ ສູນໃຫ້ຄຳປຶກສາຊາວຕ່າງຊາດ, ສູນຊ່ວຍເຫຼືອແຮງງານຕ່າງຊາດ, ສູນຊຸມຊົນຕ່າງຊາດ ແລະ ອື່ນໆ ) ຈະໄດ້ຮັບພິຈາລະນາເປັນພິເສດ

☐ **(ຄຸນສົມບັດຜູ້ສະໝັກ)** ຄົນຕ່າງຊາດທີ່ພັກອາໄສໃນເກົາຫຼີແບບຖືກກົດຫມາຍ ແລະ ເຄີຍມີປະຫວັດການເຮັດວຽກໃນບໍລິສັດເກົາຫລີລວມເປັນເວລາ 2 ປີ ຂຶ້ນໄປ

ສາມາດສື່ສານພາສາບ້ານເກີດ ແລະ ພາສາເກົາຫຼີໄດ້

* ຕ້ອງບໍ່ມີເຫດຖືກຕັດສິດຕາມເກນປະກາດ ອີງຕາມປະເພດຂອງວີຊ່າທີ່ສາມາດເຮັດກິດຈະກຳ "ຜູ້ນຳດ້ານສິດທິມະນຸດຂອງຄົນຕ່າງປະເທດ" ໄດ້

○ **(ເງື່ອນໄຂພິເສດ)** ຜູ້ທີ່ຈະໄດ້ຮັບພິຈາລະນາເປັນພິເສດແມ່ນມີດັ່ງຕໍ່ໄປນີ້:

- ຜູ້ທີ່ໄດ້ຮັບການແນະນຳຈາກກະຊວງແຮງງານ ແລະ ການຈ້າງງານ(ອົງການພັດທະນາຊັບພະຍາກອນມະນຸດແຫ່ງ ສ.ເກົາຫຼີ, ສູນໃຫ້ຄຳປຶກສາແຮງງານຕ່າງຊາດ, ສູນຊ່ວຍເຫຼືອແຮງງານຕ່າງຊາດ).
  ອົງການປົກຄອງທ້ອງຖິ່ນ(ສູນສະຫນັບສະຫນູນແຮງງານຕ່າງຊາດ, ສູນບໍລິການຊຸມຊົນສຳລັບຕ່າງຊາດ ) ອົງກອນ ແລະ ຫນ່ວຍງານເອກະຊົນສຳລັບຊາວຕ່າງຊາດ

  * ຜູ້ທີ່ມີຄຸນສົມບັດຕາມເງື່ອນໄຂຂ້າງເທິງ ຈຳເປັນຕ້ອງຍື່ນໜັງສືແນະນຳ

- ຜູ້ທີ່ມີປະສົບການໃນການເຮັດກິດຈະກຳກັບໜ່ວຍງານທີ່ກ່ຽວຂ້ອງກັບຄົນຕ່າງປະເທດ ຫຼື ອົງກອນສະໜັບສະໜູນຄົນຕ່າງປະເທດ

- ຜູ້ທີ່ມີເຄືອຂ່າຍການຕິດຕໍ່ ແລະ ແລກປ່ຽນເຄື່ອນໄຫວກິດຈະກຳໃນສັງຄົມຂອງຄົນຕ່າງປະເທດ ຕາມແຕ່ສັນຊາດ, ແຕ່ລະທ້ອງຖິ່ນ ຢ່າງຫ້າວຫັນ

- ຜູ້ທີ່ຜ່ານການເສັງວັດລະດັບພາສາເກົາຫຼີ TOPIK ລະດັບ 4 ຂຶ້ນໄປ ຫຼື ຈົບຫຼັກສູດ KIIP ລະດັບ 4 ຂຶ້ນໄປ

  * ຄວາມສາມາດດ້ານພາສາເກົາຫຼີ TOPIK ລະດັບ 4: ມີຄວາມສາມາດດ້ານການອ່ານ, ການຟັງ, ການຂຽນ ແລະ ການເວົ້າ ໃນລະດັບທີ່ຂ້ອນຂ້າງສັບຊ້ອນເຊິ່ງຕ້ອງການໃຊ້ປະຕິບັດວຽກງານໃນຊີວິດປະຈຳວັນໄດ້ ແລະ ສາມາດເຂົ້າໃຈຂ່າວ ຫຼື ບົດຄວາມໃນໜັງສືພິມທີ່ງ່າຍໄດ້

☐ **(ເນື້ອໃນກິດຈະກຳ)** ກິດຈະກຳເພື່ອປ້ອງກັນການລະເມີດສິດ ແລະ ຜົນປະໂຫຍດຂອງຄົນຕ່າງປະເທດ, ປົກປ້ອງ ແລະ ຄຸ້ມຄອງສິດທິຂອງຊາວຕ່າງຊາດ

○ **(ຕິດຕາມເຫດການ)** ຫລັງຈາກກວດພົບກໍລະນີມີການຂົ່ມເຫັງ, ຈຳແນກ, ຫຼື ລະເມີດສິດຜົນປະໂຫຍດຮ້າຍແຮງ ໃນຊຸມຊົນຄົນຕ່າງຊາດ ໃຫ້ແຈ້ງສຳນັກງານແຮງງານທ້ອງຖິ່ນທັນທີ.

* ຜູ້ນຳດ້ານສິດທິມະນຸດຕ້ອງຍື່ນ <ບັນທຶກເຫດການກໍລະນີ> ເມື່ອເກີດເຫດການລະເມີດສິດທິມະນຸດຢ່າງຮ້າຍແຮງ

ເຊັ່ນ ການທໍາຮ້າຍຮ່າງກາຍ ຕ້ອງແຈ້ງ ຫຼື ສົ່ງຕໍ່ຂໍ້ມູນໃຫ້ແກ່ຫນ່ວຍງານແຮງງານແລະການຈ້າງງານປະຈໍາທ້ອງຖິ່ນໂດຍທັນທີ

- **(ເຂົ້າຮ່ວມກອງປະຊຸມ)** ກອງປະຊຸມປຶກສາຫາລືທົ່ວໄປ(ແຕ່ລະໄຕມາດ, ການດໍາເນີນງານ ແລະ ສາມາດຈັດເພີ່ມເຕີມໄດ້ຕາມຄວາມຈໍາເປັນ) ເພື່ອຖ່າຍທອດຄວາມຄິດເຫັນ ແລະ ແຈ້ງກໍລະນີການລະເມີດສິດ ແລະ ຜົນປະໂຫຍດຂອງຊາວຕ່າງຊາດ
- **(ໃຫ້ຄໍາປຶກສາດ້ານສິດທິມະນຸດ)** ປະຕິບັດບົດບາດເປັນຊ່ອງທາງການສື່ສານກ່ຽວກັບການລະເມີດສິດ ແລະ ຜົນປະໂຫຍດຂອງຄົນຕ່າງປະເທດ ໂດຍໃຫ້ຄໍາແນະນໍາກ່ຽວກັບຂັ້ນຕອນການຄຸ້ມຄອງສິດ, ຂໍ້ມູນອົງການທີ່ກ່ຽວຂ້ອງ ລວມທັງການຊ່ວຍແປພາສາ ແລະ ເປັນລ່າມແປພາສາ ໃຫ້ແກ່ແຮງງານຕ່າງຊາດ
- **(ການປະຊາສໍາພັນ ແລະ ການແນະນໍາ)** ເຜີຍແຜ່ ແລະ ແບ່ງປັນຜ່ານ SNS ກ່ຽວກັບນະໂຍບາຍສໍາຄັນ, ເອກະສານແນະນໍາ ແລະ ແຄມເປນຕ່າງໆ ເພື່ອຍົກລະດັບສິດ ແລະ ຜົນປະໂຫຍດດ້ານແຮງງານຂອງແຮງງານຕ່າງຊາດ
- **(ການແປພາສາ ແລະ ການກວດແກ້)** ມີສ່ວນຮ່ວມໃນການແປ ແລະ ກວດແກ້ເອກະສານຫນັງສືການແນະນໍາ, ຫນັງສືການສິດສອນ ແລະ ເອກະສານອື່ນໆ ທີ່ກ່ຽວກັບການຄຸ້ມຄອງສິດທິມະນຸດຂອງຄົນຕ່າງປະເທດ

☐ **(ໄລຍະການເຮັດວຽກ)** ນັບແຕ່ວັນທີ່ໄດ້ຮັບການຄັດເລືອກ ເປັນໄລຍະເວລາ 1 ປີ (ຄາດວ່າຈະສິ້ນສຸດໃນທ້າຍເດືອນ 6 ປີ 2027)

☐ **(ເອກະສານທີ່ຕ້ອງສົ່ງ)**

1. ໃບສະໝັກ (ລວມເຖິງໃບຍິນຍອມໃນການເກັບກໍາ, ນໍາໃຊ້ ແລະ ເປີດເຜີຍຂໍ້ມູນສ່ວນບຸກຄົນ)

2. ໜັງສືແນະນໍາ

3. ໃບຢັ້ງຢືນການກວດກາຄວາມເຫມາະສົມ

4. ໃບຢັ້ງຢືນອື່ນໆທີ່ກ່ຽວຂ້ອງ

*ສາມາດເຂົ້າຍື່ນດ້ວຍຕົນເອງຕໍ່ສໍານັກງານແຮງງານພາກພື້ນ (ພະແນກບໍລິຫານແຮງງານຕ່າງປະເທດ) ທາງໄປສະນີ ຫຼື ອີເມວ

☐ **(ຜົນປະໂຫຍດຈາກການເຮັດກິດຈະກໍາ)**

ມີການມອບໃບແຕ່ງຕັ້ງໃຫ້ແກ່ຜູ້ນໍາດ້ານສິດທິມະນຸດຂອງຄົນຕ່າງປະເທດ, ຈ່າຍຄ່າຕອບແທນສໍາລັບການເຂົ້າຮ່ວມປະຊຸມ ແລະ ຄ່າໃຊ້ຈ່າຍໃນການປະຕິບັດກິດຈະກໍາ, ພ້ອມທັງມອບລາງວັນໃຫ້ແກ່ຜູ້ທີ່ມີຜົນງານດີເດັ່ນ

☐ **(ຂັ້ນຕອນການຄັດເລືອກ)** ການກວດເອກະສານ ແລະ ສໍາພາດ (ຕົ້ນເດືອນ 7 ປີ 2026)

→ ປະກາດຜົນຜູ້ຜ່ານການຄັດເລືອກ ໃນເດືອນ ກາງເດືອນ7 ປີ 2026

* ຫຼັງຈາກກວດກາເອກະສານແລ້ວ ຈະມີການແຈ້ງກໍານົດການສໍາພາດ ແລະ ແຈ້ງຜົນຜູ້ຜ່ານຂັ້ນສຸດທ້າຍໃຫ້ເປັນສ່ວນບຸກຄົນ

☐ **(ສອບຖາມຂໍ້ມູນໄດ້ທີ່)** ເບີຕິດຕໍ່ຫຼັກຂອງກະຊວງແຮງງານ ແລະ ການຈ້າງງານ(☎ 1350)

ຫຼື ພະແນກແຮງງານຕ່າງປະເທດຂອງກົມແຮງງານ ແລະ ການຈ້າງງານປະຈຳທ້ອງຖິ່ນ

(ກະລຸນາກວດສອບໃນຂໍ້ມູນການປະກາດຮັບສະໝັກ)